ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ: 0076 /ກປ

ນະຄອນຫຼວງວຽງຈັນ, ວັນທີ: 12/10/18

# ຄຳແນະນຳ

## ກ່ຽວກັບ ການສ້າງ ລະບົບຄ້ຳປະກັນ ໄມ້ທີ່ຖືກຕ້ອງຕາມກົດໝາຍ

- ອີງຕາມ ກົດໝາຍ ວ່າດ້ວຍ ປ່າໄມ້ ສະບັບ ເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມ ດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບ ເລກທີ 99/ນຍ, ລົງວັນທີ 09 ມີນາ 2017, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງກະສິກຳ ແລະ ປ່າໄມ້.
- ອີງຕາມ ຂໍ້ຕົກລົງ ຂອງ ນາຍົກລັດຖະມົນຕີ ສະບັບ ເລກທີ 65/ນຍ, ລົງວັນທີ 19 ສິງຫາ 2015, ວ່າດ້ວຍ ການແຕ່ງຕັ້ງ ຄະນະກຳມະການຊີ້ນຳລະດັບຊາດ ກ່ຽວກັບ ການເປັນຄູ່ຮ່ວມສັນຍາການຄ້າໄມ້ແບບສະໝັກໃຈ (VPA) ແລະ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT).
- ອີງຕາມ ຂໍ້ຕົກລົງ ຂອງ ກະຊວງ ກະສິກຳ ແລະ ປ່າໄມ້ ສະບັບເລກທີ 1868/ກປ, ລົງວັນທີ 09 ມີນາ 2016 ວ່າດ້ວຍ ການແຕ່ງຕັ້ງ ຄະນະຮັບຜິດຊອບຊຸກຍູ້ການເຈລະຈາ ແລະ ຄະນະປະສານງານດ້ານວິຊາການ ກ່ຽວກັບ ການຕົກລົງເປັນຄູ່ຮ່ວມສັນຍາການຄ້າໄມ້ແບບສະໝັກໃຈ ລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບ ແລະ ການປະຕິບັດ ກົດໝາຍວ່າດ້ວຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້.

ເພື່ອຮັບປະກັນ ຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດ ແຜນງານ ການຈັດຕັ້ງປະຕິບັດ ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ເພື່ອຈະເປັນຄູ່ຮ່ວມສັນຍາການຄ້າໄມ້ແບບສະໝັກໃຈ ລະຫວ່າງ ສປປ ລາວ ແລະ ສະຫະພາບເອີຣົບ ໃຫ້ປະກົດຜົນເປັນຈິງ ແລະ ເພື່ອເຮັດໃຫ້ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງປ່າໄມ້, ການຊຸດຄົ້ນໄມ້, ການນຳເຂົ້າໄມ້, ການນຳໃຊ້ແຮງງານ, ການປຸງແຕ່ງໄມ້, ການນຳໃຊ້ ໄມ້ ແລະ ຜະລິດຕະພັນໄມ້ ພາຍໃນແລະສົ່ງອອກໄປຕ່າງປະເທດ ໃຫ້ມີຄວາມເຂັ້ມງວດຕາມກົດໝາຍ ແລະ ນິຕິກຳອື່ນໆ ທີ່ວາງອອກ, ທັງເປັນການຕ້ານ ແລະ ສະກັດກັ້ນ ການລັກລອບຕັດໄມ້ ແລະ ການຄ້າຂາຍ ໄມ້ເຖື່ອນ ໃຫ້ຫຼຸດລົງ ແລະ ໝົດໄປ ເທື່ອລະກ້າວ.

## ລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້ ອອກຄຳແນະນຳ ດັ່ງນີ້:

1. ໃຫ້ຄະນະຮັບຜິດຊອບຊຸກຍູ້ການເຈລະຈາ, ຄະນະປະສານງານດ້ານວິຊາການ, ກຸ່ມຊ່ຽວຊານສະເພາະດ້ານ ແລະ ຫ້ອງການປະສານ ແຜນງານ ການຈັດຕັ້ງປະຕິບັດ ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ເພື່ອຈະເປັນຄູ່ຮ່ວມສັນຍາການຄ້າໄມ້ແບບສະໝັກໃຈ ລະຫວ່າງ ສປປ ລາວ ແລະ ສະຫະພາບເອີຣົບ ສ້າງລະບົບຄ້ຳປະກັນໄມ້ທີ່ຖືກຕ້ອງຕາມກົດໝາຍ ໂດຍການເຂົ້າຮ່ວມຢ່າງຕັ້ງໜ້າ ຂອງ ກະຊວງທີ່ກ່ຽວຂ້ອງ, ສະພາແຫ່ງຊາດ, ສະຖາບັນການສຶກສາ, ອົງການຈັດຕັ້ງທາງສັງຄົມ, ຜູ້ປະກອບການກ່ຽວກັບທຸລະກິດໄມ້ ແລະ ທ້ອງຖິ່ນ;

2. ຈຸດປະສົງ ຂອງ ການສ້າງລະບົບຄໍ້າປະກັນ ໄມ້ທີ່ຖືກຕ້ອງຕາມກົດໝາຍ ແມ່ນເພື່ອຮັບປະກັນ ແລະ ຢັ້ງຢືນວ່າ ໄມ້ ແລະ ຜະລິດຕະພັນໄມ້ ໄດ້ຜ່ານ ການຂຸດຄົ້ນ, ປຸງແຕ່ງ ແລະ ຄ້າ-ຂາຍ ທີ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ. ລະບົບຄໍ້າປະກັນ ໄມ້ທີ່ຖືກຕ້ອງຕາມກົດໝາຍ ຕ້ອງມີບັນດາອົງປະກອບ ທີ່ສໍາຄັນ ດັ່ງນີ້:

2.1 ນິຍາມໄມ້ແລະຜະລິດຕະພັນໄມ້ທີ່ຖືກຕ້ອງຕາມກົດໝາຍ, ຊຶ່ງຕົວຢ່າງນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ໄດ້ຕິດຂັດມາພ້ອມນີ້;

2.2 ວິທີການຄວບຄຸມ ຕ່ອງໂສ້ການສະໜອງໄມ້ ແລະ ຜະລິດຕະພັນໄມ້ ຈາກ ຈຸດຂຸດຄົ້ນ ຫຼື ຈຸດນໍາເຂົ້າ ຈົນຮອດ ຕະຫຼາດ ພາຍໃນ ຫຼື ສົ່ງອອກ ໄປຕ່າງປະເທດ;

2.3 ຂະບວນການເພື່ອຢັ້ງຢືນວ່າ ໄມ້ທີ່ຖືກຕ້ອງຕາມກົດໝາຍ ແລະ ວິທີຄວບຄຸມຕ່ອງໂສ້ການສະໜອງໄມ້ ແລະ ຜະລິດຕະພັນໄມ້ ແມ່ນຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການແທ້;

2.4 ຂະບວນການອອກໃບອະນຸຍາດ ໄມ້ທີ່ຖືກຕ້ອງຕາມກົດໝາຍ ສໍາລັບ ການຄ້າ ພາຍໃນ ແລະ ສົ່ງອອກ ໄປຕ່າງປະເທດ;

2.5 ຂະບວນການກວດສອບອິດສະລະ ເພື່ອຕິດຕາມ ການຈັດຕັ້ງປະຕິບັດ ລະບົບຄໍ້າປະກັນໄມ້ທີ່ຖືກຕ້ອງຕາມກົດໝາຍ ແມ່ນຖືກຕ້ອງຕາມທຸກຂໍ້ກໍານົດ ທີ່ໄດ້ກໍານົດໄວ້.

3. ໃຫ້ກົມກວດກາປ່າໄມ້ ເປັນກອງເລຂາ ຮັບຜິດຊອບ ປະສານງານ ກັບພາກສ່ວນທີ່ກ່ຽວຂ້ອງ ຂອງລັດ, ອົງການຈັດຕັ້ງທາງສັງຄົມ, ຜູ້ປະກອບການກ່ຽວກັບທຸລະກິດໄມ້ ແລະ ທ້ອງຖິ່ນ ໃນການສ້າງ ລະບົບຄໍ້າປະກັນ ໄມ້ທີ່ຖືກຕ້ອງຕາມກົດໝາຍ, ດັ່ງນີ້:

3.1 ສ້າງຕັ້ງ ຫ້ອງການປະສານງານ ແຜນງານການຈັດຕັ້ງປະຕິບັດ ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ເພື່ອຈະເປັນຄູ່ຮ່ວມສັນຍາການຄ້າໄມ້ແບບສະໝັກໃຈ ລະຫວ່າງ ສປປ ລາວ ແລະ ສະຫະພາບເອີຣົບ;

3.2 ຄົ້ນຄວ້າ, ສະເໜີສ້າງ ແລະ ປັບປຸງນິຕິກໍາ ທີ່ກ່ຽວຂ້ອງກັບ ລະບົບຄໍ້າປະກັນ ໄມ້ທີ່ຖືກຕ້ອງຕາມກົດໝາຍ;

3.3 ເກັບກໍາ, ສັງລວມ, ວິໄຈ ກ່ຽວກັບ ຂໍ້ມູນໄມ້ ເພື່ອເປັນບ່ອນອີງ ໃນການພັດທະນາ ນິຕິກໍາ, ລະບົບຄໍ້າປະກັນ ໄມ້ທີ່ຖືກຕ້ອງຕາມກົດໝາຍ;

3.4 ລົງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກວດກາຂໍ້ມູນຕົວຈິງ ດ້ານເອກະສານ ແລະ ວັດຖຸຕົວຈິງ ເພື່ອເປັນບ່ອນອີງໃນການພິຈາລະນາຢັ້ງຢືນໄມ້ ຕາມນິຍາມຂອງ ໄມ້ທີ່ຖືກຕ້ອງຕາມກົດໝາຍ;

3.5 ຄົ້ນຄວ້າ, ນໍາສະເໜີ ຂັ້ນເທິງ ອອກໃບຢັ້ງຢືນ ໄມ້ທີ່ຖືກຕ້ອງຕາມກົດໝາຍ ເພື່ອການນໍາໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ.

4. ໃຫ້ກົມວິຊາການ ທີ່ກ່ຽວຂ້ອງ ຂອງ ກະຊວງ ກະສິກໍາ ແລະ ປ່າໄມ້; ກະຊວງອຸດສາຫະກໍາ ແລະ ການຄ້າ; ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ; ກະຊວງການເງິນ; ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະໜັບສະໜູນ ການສ້າງ ລະບົບຄໍ້າປະກັນໄມ້ທີ່ຖືກຕ້ອງຕາມກົດໝາຍ ແລະ ສືບຕໍ່ປັບປຸງ ບັນດານິຕິກໍາ ທີ່ກ່ຽວຂ້ອງ;

5. ໃຫ້ຄະນະປັບປຸງກົດໝາຍວ່າດ້ວຍປ່າໄມ້ ກໍານົດ ເນື້ອໃນ ລະບົບຄໍ້າປະກັນໄມ້ທີ່ຖືກຕ້ອງຕາມກົດໝາຍ ເຂົ້າໃນກົດໝາຍວ່າດ້ວຍປ່າໄມ້ ເພື່ອຮັບປະກັນ ການຄ້າ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຕ້ອງຕາມກົດໝາຍ ໂດຍຜ່ານ ລະບົບດັ່ງກ່າວນີ້.

6. ໃຫ້ກົມກວດກາປ່າໄມ້ ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການເຜີຍແຜ່ເຊື່ອມຊຶມ, ພົນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຄໍາແນະນໍາ ສະບັບນີ້ ເພື່ອເຮັດໃຫ້ ການສ້າງລະບົບຄໍ້າປະກັນໄມ້ທີ່ຖືກຕ້ອງຕາມ

ກົດໝາຍ ເຂົ້າໃຈງ່າຍ, ກະທັດຫັດ, ສາມາດປະຕິບັດໄດ້ ແລະ ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

7. ຄໍາແນະນໍາ ສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີ ກະຊວງກະສິກໍາ ແລະ ປ່າໄມ້

ປອ.ລຽນ ທິແກ້ວ